ພັນທະມິດເພື່ອປະຊາທິປະໄຕໃນລາວ
ALLIANCE FOR DEMOCRACY IN LAOS
Alliance pour la Démocratie au Laos

Letmather Str.71, 58119 Hagen, Germany. Phone: 0049( 2334) 44 44 668, E-Mail: alliance-lao@alice.de
www.laoalliance.org

# ຖະແຫຼງການຂອງພັນທະມິຕເພື່ອປະຊາທິປະໄຕໃນລາວເລື່ອງ ບັນຫານ້ຳຖອມໃນລາວ

ພວກເຮົາ ອົງການ ພັນທະມິຕເພື່ອປະຊາທິປະໄຕໃນລາວ ພ້ອມ ດ້ວຍ ຊຸມຊົນລາວ ທີ່ຮັກຫອມຄວາມເປັນທັມ ໃນທົ່ວໂລກ ຂໍສະແດງຄວາມເປັນຫວ່ງໄຍ ສົງສານ ຕໍ່ ພໍ່ແມ່ພີ່ນ້ອງປະຊາຊົນລາວ ໃນປະທດ ທີ່ກຳລັງປະສົບ ບັນຫາ ໄພນ້ຳຖ້ວມ ອັນຮ້າຍແຮງ ໃນປະຈຸບັນ ເປັນຕົ້ນ ແມ່ນ ຢູ່ ແຂວງຄຳມ່ວນ, ສະຫວັນນະເຂດ, ບໍລິຄຳໄຊ, ໄຊຍະບູລີ, ຫົວພັນ, ຫລວງພະບາງ, ສາລະວັນ ແລະ ແຂວງວຽງຈັນ. ຄວາມເສຍຫາຍເປັນຈຳນວນຫຼວງຫຼາຍ ເຊັ່ນ: ນ້ຳຖ້ວມຈົນເຖິງຫລັງຄາເຮືອນ, ຖນົນຫົນທາງ ເປ່ເພແຕກຫັກ ຢ່າງຫຼວງຫຼາຍ, ໄຮ່ນາຮົ້ວສວນ ສັດສວນ,ສັດສາວາສິ່ງ ແລະ ສັບພະຍາກອນທຳມະຊາດທັງໝົດ ຖືກທຳລາຍ ຢ່າງມະຫາສານ ເຮັດໃຫ້ປະຊາຊົນລາວບັນດາເຜົ່າ ຍິ່ງທຸກຍາກລຳບາກ ສິ້ນເນື້ອປະດາຕົວ.

ພັກ-ລັດ ບໍ່ເອົາໃຈໃສ່ຊ່ວຍເຫລືອຜູ້ປະສົບໄພນ້ຳຖ້ວມ ຢ່າງຈິງຈັງ, ເງິນຊ່ວຍເຫລືອ ທີ່ພັກລັດໄດ້ຮັບມາ ຈາກການ ບໍລິຈາກ ກໍແມ່ນ ເປັນຂອງ ກຸ່ມພັກພວກບໍລິສັດຕ່າງໆ ທີ່ມີສ່ວນຮ່ວມກັບ ຜູ້ກຳອຳນາດເອງ ຈຳນວນ 16 ຕື້ກີບ ແຕ່ ລັຖະບານເອົາໄປຊ່ວຍ ພຽງແຂວງດຽວ ຄື ແຂວງຄຳມ່ວນ ເມືອງຄູນຄຳ ພຽງ 50 ລ້ານກີບ ເຫລືອນັ້ນ ຮົ່ວໄຫລ ບໍ່ມີໃຜຮູ້.

ໜ່ວຍກູ້ໄພ ຂອງໄທ ຢາກຕອບສນອງ ຄຳຮ້ອງຂໍ ການຊ່ວຍເຫລືອ ຂອງປະຊາຊົນລາວ ແຕ່ຖືກຈົງໃຈ ສະກັດກັ້ນ ຈາກ ທາງການ ພັກລັດ ໂດຍໃຫ້ຄຳຕອບ ຊັກຊ້າ ແລະ ບໍ່ໃຫ້ຄວາມສຳຄັນ. ເຊັ່ນວ່າ: ຜູ້ປະສົບໄພນ້ຳຖ້ວມຈາກແຂວງຄຳມ່ວນ ໄດ້ຮ້ອງຂໍ ໃຫ້ ເຈົ້າໜ້າທີ່ ໜ່ວຍກູ້ໄພ ຂອງໄທ ຊ່ວຍເຫຼືອ, ດັ່ງນັ້ນ ໜ່ວຍກູ້ໄພ ເມດຕາທັມຂອງ ໄທ ຈາກແຂວງພະນົມ ໄດ້ເຂົ້າໄປຊ່ວຍ ເຂົາເຈົ້າ, ເຖິງແມ່ນວ່າ ຖືກຊັກຊ້າ ຍ້ອນ ລໍຖ້າ ການອະນຸຍາດ ຈາກ ທາງການລາວ, ຊ້ຳບໍ່ໜຳ ຍັງມີບາງຄົນຈາກປະເທດລາວທີ່ເປັນໃຈພັກລັດ ໃຫ້ຄຳເຫັນວ່າ „ພວກເຮົາບໍ່ໄດ້ຂໍຄວາມຊ່ວຍເຫຼືອຈາກເຈົ້າ, ເປັນຫຍັງເຈົ້າຈຶ່ງຊ່ວຍ? „ ໃນທີ່ສຸດ ໜ່ວຍກູ້ໄພຂອງໄທ ກໍຟ້າວກັບ ຄືນໄປໄທ.

ເຫດການ ທີ່ ກ່າວມາເທິງນີ້ ກໍຍ້ອນ ຜູ້ກຳອຳນາດຜະເດັດການໃນລາວ ຢາກປົກປິດ ບໍ່ໃຫ້ໂລກພາຍນອກ ໄດ້ຮູ້ເຫັນຄວາມເປັນຈິງ ຜົນທະທົບໄພພິບັດ ອັນຮ້າຍແຮງຕໍ່ປະຊາຊົນລາວ. ການກະທຳຂອງ ທາງການ ລາວ ທີ່ ສະ ກັດກັ້ນ ການຊ່ວຍເຫຼືອປະຊາຊົນລາວ ທີ່ຖືກກະທົບໄພ ທີ່ກ່າວມາເທິງນີ້ ຄືເປັນການຈົງໃຈ ຫວັງ ຈະຂ້າຄົນລາວ ທາງອ້ອມ.

ເປັນຫຍັງຈີນ ແລະຫວຽດນາມ ທີ່ມີການປົກຄອງແບບຜະເດັດການ ທີ່ ມິດຕະພາບກັບ ສປປລາວ ແລະ ເປັນຜູ້ ສ້າງເຂື່ອນ ແລະ ຕັດໄມ້ ທຳລາຍປ່າ ໃນລາວ ຢ່າງຫຼວງຫຼາຍ ບໍ່ເຫັນ ມີການຊ່ວຍເຫລືອປະຊາຊົນລາວ ແຕ່ ປະການໃດລີຍ.

ບັນຫານ້ຳຖ້ວມໃນລາວ ມີຂຶ້ນ ໃນທຸກໆປີ ເກືອບ ທຸກແຂວງ ໃນທົ່ວປະເທດ, ທາງການ ສປປລາວມັກຈະອ້າງວ່າ ເປັນໄພ ທຳມະຊາດ ຍ້ອນຝົນຕົກ. ແຕ່ ພວກເຮົາເຫັນວ່າ ບັນຫານ້ຳຖ້ວມ ທີ່ຮ້າຍແຮງໃນລາວ ແມ່ນ ມາຈາກ ບັນຫາ ການ ຕັດໄມ້ ທຳລາຍປ່າ ແລະ ບັນຫາ ການສ້າງເຂື່ອນທີ່ບໍ່ມີຂອບເຂດແລະ ບໍ່ໄດ້ ມາຕະຖານສາກົນ. ລະດູຝົນ ກໍ່ ມີການ ປ່ອຍເຂື່ອນ ມາຈາກ ດິນ ຈີນ ແລ້ວ ເພີ່ມໃສ່ ການ

ປ່ອຍເຂື່ອນໃນດິນລາວ,  ການປ່ອຍເຂື່ອນ ສ່ວນຫຼາຍ ແມ່ນບໍ່ມີການກະກຽມຮັບມື ແລະ ບໍ່ໄດ້ແຈ້ງການ ລ່ວງຫນ້າຢ່າງທັນການ  ໃຫ້ ປະຊາຊົນ ຊາບກ່ອນ ແລ້ວຍັງ ປິດບັງ ຄວາມຈິງ.

ດັ່ງນັ້ນ ພວກເຮົາ ອົງການ ພັນທະມິດເພື່ອປະຊາທິປະໄຕໃນລາວ  ພ້ອມ ດ້ວຍ ຊຸມຊົນລາວ ທີ່ ຮັກຫອມຄວາມເປັນທັມ ຢູ່ໃນ ແລະ ນອກປະເທດ ໃນທົ່ວໂລກ ຈຶ່ງທວງ ມາດັ່ງນີ້:

1. ທວງທາງການ ສປປລາວ ຍຸດການປ່ອຍໃຫ້ມີການສ້າງເຂື່ອນ ທີ່ບໍ່ມີ ຂອບເຂດໃນລາວ ທີ່ ບໍ່ໄດ້ໃຫ້ ຜົນປະໂຫຍດ ແກ່ ປະຊາຊົນລາວ ແຕ່ເປັນພຽງຜົນປະໂຫຍດ ຫຼາຍຢ່າງ ໃຫ້ແກ່ນາຍ ທຶນຈີນ ແລະ ນາຍທຶນຕ່າງຊາດອື່ນໆ ເທົ່ານັ້ນ.
2. ທວງໃຫ້ ຍຸດການຕັດໄມ້ທຳລາຍປ່າໃນລາວ ຢ່າງຈິງຈັງ
3. ທວງໃຫ້ ພັກລັດ ແລະ ນາຍທຶນຜູ້ສ້າງເຂື່ອນ ແລະ ຕັດໄມ້ ທຳລາຍປ່າໃນລາວ ຈົ່ງທຳການຊ່ວຍ ເຫລືປະຊາຊົນລາວຜູ້ໄດ້ຮັບຜົນກະທົບໄພນ້ຳຖ້ວມ ຢ່າງ ຈິງຈັງ ແລະ ຮີບດ່ວນ.
4. ທວງໃຫ້ ຜູ້ນຳພັກລັດ ຈົ່ງຍອມເສັຽກຽດ ໃຫ້ຄວາມສະດວກ ແກ່ອົງການຊ່ວຍເຫລືອ ໄພພິບັດ ແລະ ມະນຸດສະທັມ ຂອງສາກົນ ແລະ ປະເທດເພື່ອນບ້ານເຂົ້າໄປຊ່ວຍ ປະຊາຊົນລາວ ທີ່ໄດ້ຮັບຜົກະທົບ ໄພນ້ຳຖ້ວມ ໃນລາວ ຢ່າງຮີບດ່ວນ.

ທີ່ເຢັຽຣະມັນ, ວັນທີ່ 16 ສິງຫາ 2023




ປະທານ ພັນທະມິດ ເພື່ອ ປະຊາທິປະໄຕ ໃນລາວ
ດຣ .ບຸນທອນ ຈັນທະລາວົງ-ວີເຊີ

**Office in Germany: Dr. Bounthone Chanthalavong- Wiese,** President, Letmather Str.71, 58119 Hagen, Germany
Phone: +49-2334-44 44 668 or +49 173 2930 267,E-mail: chanthalavong@aol.com
**France:** **Mr.Somphet Vatthanou** Vice-President , 2 AV Combattant en a.f.n.69140, Rillieux La Pape,
Phone: +33-6-15192201, E-mail: s.vatthanou@gmail.com
**USA:** **Ms.Khamphene Souvannasane,** regional president, ADL chapter of USA , 3837 Rusty Dell St.,
Fortworth, TX 76111, Phone:+1-682- 554- 6675 , E-mail: khamhene@yahoo.com.
Vice regional president: **Vieng Savahn**: phone 714-305-7748
**Canada:** **Mr.Kambane Anonthisen,** regional president, ADL chapter of Canada, 84 Highgatz Rord Kichener , ONT,
Phone:+1-519-58 80 502, E-mail: khambane@hotmail.com
**Australia:** **Mr.Pheng Sacksady,** regional president, ADL chapter of Australia, 6 Quambone Place,Isabella Plains A.C.T,
Phone+61-41 37 66 216, E-mail: pheng.sone52@gmail.com
**New Zealand:** **Mr. Somchine Sithivong,** regional president, ADL chapter of New Zeeland**,** 6 Ropata Cres, Lower Hutt.
5010 Wellington,phone: +64- 49 34 86 35, E-Mail: xsittivong24@gmail.com